# ແຈ້ງຂ່າວ ຄວາມຄືບໜ້າອຸບັດຕິເຫດເຮືອບິນ ຖ້ຽວບິນ Qv 301 ຕົກທີ່ແຂວງ ຈຳປາສັກ ວັນທີ 16-28 ຕຸລາ 2013

ຄວາມຄືບໜ້າ ໃນການຊອກຄົ້ນ, ເກັບກູ້ ແລະສັນລະສູດລັກສະນະບຸກຄົນ ຜູ້ປະສົບເຄາະຮ້າຍ ຈາກອຸບັດຕິເຫດເຮືອບິນ ຖ້ຽວບິນ QV 301 ຕົກທີ່ແຂວງ ຈຳປາສັກ ຄັ້ງວັນທີ 16 ຕຸລາ 2013 ທີ່ຜ່ານມາ ມີຈຳນວນຜູ້ໂດຍສານ ແລະຈຸບິນມີທັງໝົດ 49 ຄົນ, ໃນນັ້ນເປັນຜູ້ໂດຍສານ 44 ຄົນ, ນັກບິນ 2 ຄົນ, ນາຍ ຊ່າງ 1 ຄົນ ແລະນາງອາກາດ 2 ຄົນ. ເປັນສັນຊາດລາວ 20 ຄົນ (16+4), ຝຣັ່ງ 7 ຄົນ, ອົດສະຕາລີ 6 ຄົນ, ໄທ 5 ຄົນ, ເກົາຫຼີໃຕ້ 3 ຄົນ, ຫວຽດນາມ 2 ຄົນ, ອາເມລິກາ 1 ຄົນ, ຈີນ 1 ຄົນ, ຈີນ (ໃຕ້ຫວັນ) 1 ຄົນ, ການາດາ 1 ຄົນ, ມາເລເຊຍ 1 ຄົນ, ກຳປູເຈຍ (ນັກບິນ) 1 ຄົນ, (ຍິງ 17+1 ເດັກນ້ອຍ = 18, ຊາຍ 30+1 ແອນ້ອຍ = 31).

ວັນທີ 16-28 ຕຸລາ 2013 ສາມາດເກັບ, ຊອກຄົ້ນໄດ້ ຈຳນວນ 47 ສົບ ແລະ 33 ສິ້ນສ່ວນ, ເກັບຕົວຢ່າງໄປກວດ DNA ຈຳນວນ 55 ລາຍການ. ສາມາດສັນລະສູດລັກສະນະບຸກຄົນ ແລະຢັ້ງຢືນໄດ້ 43 ກໍລະນີ (42 ສົບ ແລະ 1 ສິ້ນສ່ວນ), ພ້ອມທັງໄດ້ສົ່ງສົບໃຫ້ພີ່ນ້ອງຂອງຜູ້ຖືກເຄາະຮ້າຍແລ້ວມີ: ຄົນລາວ 18 ລາຍ, ຍິງ 8 ລາຍ ແລະ ຄົນຕ່າງປະເທດ 25 ລາຍ, ຍິງ 6 ລາຍ, ໃນວັນທີ 28 ຕຸລາ 2013 ທີ່ຜ່ານມາ ໄດ້ມີການມອບ 3 ສົບ ໂດຍແມ່ນສັນຊາດຝຣັ່ງ.

ນອກນັ້ນ, ຍັງມີ 5 ຮ່າງສົບ ແລະ 31 ສິ້ນສ່ວນ ທີ່ບໍ່ທັນສັນລະສູດໄດ້ (ລໍຜົນກວດ DNA), ຜູ້ຖືກເຄາະຮ້າຍສັນລະສູດບໍ່ທັນໄດ້ຍັງ 6 ກໍລະນີ ໃນນັ້ນມີຄົນລາວ 2 ຄົນ, ສັນຊາດຝຣັ່ງ 3 ຄົນ, ສັນຊາດອົດສະຕາລີ 1 ຄົນ.